ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາປະຊາຊົນແຂວງໄຊຍະບູລີ

ເລກທີ 49 /ສພຂ.ຊຍ

ໄຊຍະບູລີ, ວັນທີ 30 ມິຖຸນາ 2025

# ມະຕິ

## ກອງປະຊຸມສະພາປະຊາຊົນແຂວງ
## ວ່າດ້ວຍການຮັບຮອງການປັບປຸງກົງຈັກການຈັດຕັ້ງ ຂັ້ນແຂວງ, ຂັ້ນເມືອງ

- ອີງຕາມ ລັດຖະທຳມະນູນແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2025) ສະ ບັບ ເລກທີ 77/ສພຊ, ລົງວັນທີ 20 ມີນາ 2025 ມາດຕາ 78 ຂໍ້ 8 ກ່ຽວກັບການພິຈາລະນາ ຮັບຮອງເອົາການສ້າງຕັ້ງ, ໂຮມເຂົ້າ ຫຼື ຍຸບເລີກ ພະແນກ, ອົງການລັດທຽບເທົ່າພະແນກ ຂອງນະຄອນຫຼວງ, ແຂວງ;
- ອີງຕາມ ກົດໝາຍ ວ່າດ້ວຍການປັບປຸງບາງມາດຕາ ຂອງກົດໝາຍ ວ່າດ້ວຍສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020 ໂລແມັງ II ມາດຕາ 12, ຂໍ້ 3.1.2 ກ່ຽວກັບການພິຈາລະນາ, ຮັບຮອງເອົາການສ້າງຕັ້ງ, ຍຸບເລີກ, ໂຮມເຂົ້າ, ແຍກອອກ ພະແນກ, ອົງການລັດທຽບເທົ່າພະແນກຂັ້ນແຂວງ ຕາມການສະເໜີຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;
- ອີງຕາມ ໜັງສືສະເໜີຂອງເຈົ້າແຂວງ ສະບັບເລກທີ 138/ຈຂ.ຊຍ, ລົງວັນທີ 27 ມິຖຸນາ 2025 ກ່ຽວກັບການຂໍພິຈາລະນາຮັບຮອງເອົາການໂຮມ, ໂອນບາງພະແນກການຂອງແຂວງ ແລະ ຫ້ອງການຂອງເມືອງ;

ຜ່ານການຄົ້ນຄວ້າ, ພິຈາລະນາ, ປະກອບຄຳຄິດຄຳເຫັນຢ່າງເລິກເຊິ່ງ, ຖີ່ຖ້ວນ ຂອງບັນດາທ່ານສະມາຊິກສະພາປະຊາຊົນແຂວງ ຕໍ່ຄຳສະເໜີຂອງອົງການປົກຄອງແຂວງ ຢູ່ໃນກອງປະຊຸມສະໄໝວິສາມັນ ເທື່ອທີ 1 ຂອງສະພາປະຊາຊົນແຂວງ ຊຸດທີ II ໃນຕອນບ່າຍ ຂອງວັນທີ 30 ມິຖຸນາ 2025.

## ກອງປະຊຸມສະພາປະຊາຊົນແຂວງ ຕົກລົງ:

**ມາດຕາ 01** ຮັບຮອງເອົາການປັບປຸງກົງຈັກການຈັດຕັ້ງຂັ້ນແຂວງ, ຂັ້ນເມືອງ ດັ່ງນີ້:

1. ໂຮມ ພະແນກ, ຫ້ອງການ ແຜນການ ແລະ ການລົງທຶນ ເຂົ້າກັບ ພະແນກ, ຫ້ອງການ ການເງິນ ເອີ້ນຊື່ວ່າ ພະແນກການເງິນແຂວງ; ຫ້ອງການ ການເງິນເມືອງ.
2. ໂຮມ ພະແນກ, ຫ້ອງການພະລັງງານ ແລະ ບໍ່ແຮ່ ເຂົ້າກັບ ພະແນກ, ຫ້ອງການອຸດສາຫະກຳ ແລະ ການຄ້າ ເອີ້ນຊື່ວ່າ ພະແນກອຸດສາຫະກຳ ແລະ ການຄ້າແຂວງ; ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ.
3. ໂຮມ ພະແນກ, ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເຂົ້າກັບພະແນກ, ຫ້ອງການກະສິກຳ ແລະ ປ່າໄມ້ ເອີ້ນຊື່ວ່າ ພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງ; ຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງ.
4. ໂຮມ ພະແນກ, ຫ້ອງການພາຍໃນເມືອງ ພ້ອມທັງຍົກຍ້າຍບຸກຄະລາກອນ ແລະ ວຽກງານໄປ ຂຶ້ນກັບພາກສ່ວນຕ່າງໆ ດັ່ງນີ້:



สแกนด้วย CamScanner

4.1 ໂອນ ວຽກຄຸ້ມຄອງພະນັກງານ-ລັດຖະກອນ, ວຽກພັດທະນາກົງຈັກການຈັດຕັ້ງ, ວຽກປົກຄອງທ້ອງຖິ່ນ, ວຽກແຂ່ງຂັນ-ຍ້ອງຍໍ, ວຽກຄຸ້ມຄອງພາລະກອນ ແລະ ວຽກງານອື່ນ ພ້ອມດ້ວຍບຸກຄະລາກອນທີ່ຮັບຜິດຊອບວຽກງານດັ່ງກ່າວ ໄປຂຶ້ນກັບ ຄະນະຈັດຕັ້ງແຂວງ; ຄະນະຈັດຕັ້ງເມືອງ.

4.2 ໂອນ ວຽກແຜນທີ່, ວຽກສາລະໜາ, ວຽກເອກະສານ ພ້ອມດ້ວຍບຸກຄະລາກອນ ທີ່ຮັບຜິດຊອບວຽກງານດັ່ງກ່າວ ໄປຂຶ້ນກັບ ຫ້ອງວ່າການແຂວງ; ຫ້ອງວ່າການເມືອງ.

4.3 ໂອນ ວຽກຄຸ້ມຄອງພົນລະເມືອງ ພ້ອມດ້ວຍບຸກຄະລາກອນ ທີ່ຮັບຜິດຊອບວຽກງານດັ່ງກ່າວ ໄປຂຶ້ນກັບ ກອງບັນຊາການປ້ອງກັນຄວາມສະຫງົບແຂວງ; ກອງບັນຊາການປ້ອງກັນຄວາມສະຫງົບເມືອງ.

4.4 ໂອນ ວຽກຫັນຫົວໜ່ວຍວິຊາການເປັນເຈົ້າຕົນເອງ ພ້ອມດ້ວຍບຸກຄະລາກອນ ທີ່ຮັບຜິດ ຊອບວຽກງານດັ່ງກ່າວ ໄປຂຶ້ນກັບ ພະແນກ ການເງິນແຂວງ; ຫ້ອງການ ການເງິນເມືອງ

5. ໂອນວຽກງານຖະແຫຼງຂ່າວ, ກອງສື່ສິ່ງພິມ ແລະ ກອງວິຊາການວິທະຍຸ-ໂທລະພາບ ທີ່ຂຶ້ນກັບ ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ການທ່ອງທ່ຽວແຂວງ; ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວເມືອງ ພ້ອມດ້ວຍບຸກຄະລາກອນ ທີ່ຮັບຜິດຊອບວຽກງານດັ່ງກ່າວ ໄປຂຶ້ນກັບ ຄະນະໂຄສະນາອົບຮົມແຂວງ; ຄະນະໂຄສະນາອົບຮົມເມືອງ. ປ່ຽນຊື່ເອີ້ນ ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ; ຫ້ອງການຖະແຫຼງຂ່າວວັດທະນະທຳ ແລະ ທ່ອງທ່ຽວເມືອງ ເປັນ ພະແນກ ວັດທະນະທຳ ແລະ ທ່ອງທ່ຽວແຂວງ; ຫ້ອງການວັດທະນະທຳ ແລະ ການທ່ອງທ່ຽວເມືອງ.

**ມາດຕາ 02** ມອບໃຫ້ອົງການປົກຄອງແຂວງ ສົມທົບກັບຄະນະຮັບຜິດຊອບປັບປຸງກົງຈັກການຈັດຕັ້ງຂັ້ນແຂວງ ແລະ ກະຊວງທີ່ກ່ຽວຂ້ອງ ນຳພາໂຮມກົງຈັກການຈັດຕັ້ງຂັ້ນແຂວງ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 1 ຂອງມະຕິສະບັບນີ້, ສຳລັບການປັບປຸງກົງຈັກຂັ້ນເມືອງ ແມ່ນໃຫ້ປັບປຸງການສາຍຕັ້ງຂັ້ນແຂວງ ບົນພື້ນຖານການປະສານສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງຢ່າງເລິກເຊິ່ງ ໃຫ້ສຳເລັດພາຍໃນເດືອນ ກໍລະກົດ ປີ 2025;

ໃນການປັບປຸງກົງຈັກການຈັດຕັ້ງດັ່ງກ່າວ ແມ່ນໃຫ້ສຸມໃສ່ຄົ້ນຄວ້າ, ເລືອກເຟັ້ນ, ສັບຊ້ອນ, ຈັດວາງພະນັກງານ-ລັດຖະກອນ ຄືນໃໝ່ຢ່າງຮັດກຸມ, ເປັນລະບົບ; ເອົາໃຈໃສ່ສຶກສາອົບຮົມການເມືອງ - ແນວຄິດພະນັກງານ-ລັດຖະກອນ ໃຫ້ມີຄວາມຮັບຮູ້, ເຂົ້າໃຈເອກະພາບສູງ, ມີນ້ຳໃຈເສຍສະລະ, ຕັດສິນໃຈປະຕິບັດຕາມການຕົກລົງຂອງຂັ້ນເທິງຢ່າງເຂັ້ມງວດ; ຈັດສັນງົບປະມານ, ສະຖານທີ່ເຮັດວຽກ ແລະ ສິ່ງອຳນວຍຄວາມສະດວກອື່ນ ຕາມຄວາມເໝາະສົມ ຮັບປະກັນໃຫ້ການປັບປຸງກົງຈັກການຈັດຕັ້ງຄັ້ງນີ້ມີຜົນສຳເລັດຕາມແຜນການທີ່ວາງໄວ້.

**ມາດຕາ 03** ບັນດາອົງການຈັດຕັ້ງ ພັກ-ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ ແລະ ປະຊາຊົນບັນດາເຜົ່າ ພາຍໃນແຂວງໄຊຍະບູລີ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດມະຕິສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 04** ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານສະພາປະຊາຊົນແຂວງ

ເພັງນີລັນ ຄຳພັນເພັງ



CS สแกนด้วย CamScanner

สแกนด้วย CamScanner